## ເລີ່ມປະຕິບັດ ການທົບທວນຄືນນະໂຍບາຍສື່ສານມວນຊົນຂອງ ເອດີບີ

ທະນາຄານພັດທະນາອາຊີ (ເອດີບີ) ແມ່ນພວມສຸມໃສ່ການທົບທວນຄືນນະໂຍບາຍສື່ສານມວນຊົນຂອງຕົນ ຢ່າງຮອບດ້ານ (ນະໂຍບາຍສື່ສານມວນຊົນ ຫຼື ນະໂຍບາຍ), ເຊິ່ງໄດ້ຖືກຮັບຮອງເອົາໃນປີ 2005. ການທົບທວນຄືນຈະໄດ້ຈັດຂື້ນໃນຮູບແບບການມີສ່ວນຮ່ວມ, ຈາກການປະກອບສ່ວນແລະການໃຫ້ຄຳຄິດເຫັນ ຈາກການສອບຖາມຫຼາກຫຼາຍພາກສ່ວນ ທີ່ຢູ່ໃນບັນດາປະເທດສະມາຊິກຂອງ ເອດີບີ. ພາຍຫຼັງທີ່ເອກະສານນະໂຍບາຍ ໄດ້ຮັບການທົບທວນຄືນແລ້ວ ຈະຖືກນຳສົ່ງໄປທີ່ຄະນະສະພາບໍລິຫານຂອງ ເອດີບີ ເພື່ອພິຈາລະນາໃນໄຕມາດທີ່ ໜຶ່ງໃນປີ 2011.

ເອດີບີ ຂໍເຊີນຊວນທຸກຄຳຄິດເຫັນຈາກບຸກຄົນທົ່ວໄປ ຕໍ່ກັບນະໂຍບາຍສື່ມວນຊົນສະບັບທີ່ຖືກນຳໃຊ້ຢູ່ປະຈຸບັນ ຈົນຮອດວັນທີ່ 15 ເມສາ 2010. ຄຳຄິດເຫັນເຫຼົ່ານີ້ ຈະໄດ້ນຳເອົາມາພິຈາລະນາໃນການກະກຽມຮ້າງເອກະສານນະໂຍບາຍສະບັບປັບປູງຄັ້ງທີ່ໜຶ່ງ ເຊິ່ງນະໂຍບາຍສະບັບດັ່ງກ່າວຈະໄດ້ຖືກນຳເອົາມາສົນທະນາໃນລະຫວ່າງກອງປະຊຸມປຶກສາຫາລືກັບມວນຊົນທົ່ວໄປ ເຊິ່ງຈະໄດ້ຈັດຂື້ນໃນຫຼາຍປະເທດສະມາຊິກ ໃນໄຕມາດທີ່ສອງຂອງປີ 2010. ໄລຍະເວລາຂອງການທົບທວນຄືນນະໂຍບາຍໄດ້ຕິດຄັດມາພ້ອມນີ້.

ນະໂຍບາຍສື່ມວນຊົນໄດ້ຮຽກຮ້ອງໃຫ້ ການປະຊາສຳພັນກັບພາຍນອກໃຫ້ມີປະສິດທິພາບ ແລະ ປັບປຸງສິດໃນການເຂົ້າຫາຂໍ້ມູນຂ່າວສານ. ເຊິ່ງມັນອີງໃສ່ ການຖືສິດອັນຊອບທຳໃນການເປີດເຜີຍ, ເວັ້ນແຕ່ວ່າ ມີບາງເຫດຜົນທີ່ເປັນຂໍ້ບັງຄັບ ທີ່ເຮັດໃຫ້ບໍ່ສາມາດເປີດເຜີຍໄດ້. ນະໂຍບາຍໄດ້ເນັ້ນໜັກເຖິງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ແລະ ການພັດທະນາທີ່ມີສ່ວນຮ່ວມ.

ນັບຕັ້ງແຕ່ການອະນຸມັດນະໂຍບາຍສື່ສານມວນຊົນໃນປີ 2005, ເອດີບີ ໄດ້ພິມແລະເຜີຍແຜ່ອອກສູ່ສາທາລະນະ ກ່ຽວກັບການປະເມີນຕີລາຄາປະຈຳປີ ເພື່ອລາຍງານການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ. ການດຳເນີນການທົບທວນຄືນກ່ຽວກັບນະໂຍບາຍນີ້ ຈະເປັນການຮັບປະກັນວ່າ ນະໂຍບາຍສື່ສານມວນຊົນ ໄດ້ຖອດຖອນເອົາບັນດາບົດຮຽນທີ່ໄດ້ຮັບ ແລະ ການພັດທະນາຂອງ ເອດີບີ. ນະໂຍບາຍຍັງຈະເຮັດໃຫ້ບັນດາພາກສ່ວນຕ່າງໆຈາກພາຍນອກໄດ້ມີໂອກາດສະແດງຄວາມຄິດເຫັນຂອງເຂົາເຈົ້າ ພ້ອມທັງໃຫ້ຄຳແນະນຳເພື່ອປັບປຸງປະສິດທິພາບຂອງນະໂຍບາຍດັ່ງກ່າວ.